


# ກິດຈະກຳ

## ອົງການກາແດງລາວ ສາຂາ ຫລວງພະບາງ ໄດ້ລົງເຄື່ອນໄຫວໃນ 6 / 2007



ສະຫຼອງວັນຜູ້ບໍລິຈາກເລືອດໂລກ ມະຫາວິທະຍາໄລສຸພານຸວົງ

ຢູ່ທີ່ໂຮງຮຽນມະຫາວິທະຍາໄລສຸພານຸວົງ ໄດ້ຈັດໃຫ້ມີພິທີສະຫຼອງວັນ, ຜູ້ບໍລິຈາກເລືອດໂລກຂຶ້ນໂດຍເປັນປະທານຂອງ ທ່ານ ກອງຈັນ ຄຳມະວົງ ຄະນະປະຈຳພັກແຂວງ ປະທານອົງການກາແດງລາວສາຂາ ຫລວງພະບາງໂດຍມີທ່ານ ຈັນສຸກ ພັນໂດລັກ ຜູ້ປະສານງານສະພາກາແດງສະວິດ ປະຈຳສາມແຂວງ ແລະ ທ່ານ ດຣ ຄຳຜາຍ ອະທິການບໍດີ ມະຫາວິທະຍາໄລສຸພານຸວົງ ພ້ອມດ້ວຍນັກຮຽນເຂົ້າຮ່ວມຮັບຟັງການເຜີຍແຜ່ປະຫວັດການເປັນມາຂອງວັນຜູ້ບໍລິຈາກເລືອດໂລກ ແລະ ຜົນງານຂອງອົງການກາແດງລາວຍາດມາໄດ້ໃນໄລຍະຜ່ານມາພາຍຫຼັງສິ້ນສຸດການເຜີຍແຜ່ປະຫວັດ ວັນບໍລິຈາກເລືອດ ໄດ້ມີກິດຈະກຳບໍລິຈາກເລືອດ ໂດຍມີຜູ້ສະມັກໃຈບໍລິຈາກເລືອດ ທັງໝົດ 45 ຄົນ ໄດ້ເລືອດທັງໝົດ 45 ຖົງ.



ທີມງານນຳພາ ອສມ ລົງຢ້ຽມບ້ານ ຫ້ວຍຖ້ຳ ເມືອງຈອມເພັດ

ທີມງານ ສົ່ງເສີມສຸຂພາບ ຂອງອົງການກາແດງລາວ ສາຂາ ຫລວງພະບາງ ໄດ້ລົງ ກວດກາຕິດຕາມການປະຕິບັດວຽກງານຂອງອາສາສະມັກກາແດງລາວ ຂັ້ນບ້ານການລົງກວດກາຄັ້ງນີ້ແມ່ນແນ່ໃສ່ກາລົງຢ້ຽມບ້ານທີ່ຕັ້ງຢູ່ຫ່າງໄກຊອກຫຼີກ ໂດຍນຳພາອາສາສະມັກບ້ານ ລົງໂຄສະນາສຸຂະສຶກສາໃຫ້ແກ່ປະຊາຊົນບ້ານເປົ້າໝາຍເພື່ອແນໃສ່ເຮັດໃຫ້ອາສາສະມັກກາແດງມີຄວາມສາມາດ ກ້າຫານໃນການໂຄສະນາສຸຂະສຶກສາໃຫ້ແກ່ປະຊາຊົນ ແລະ ຊ່ວຍພັດທະນາບ້ານອາສາສະມັກກາແດງ ທີ່ຍັງບໍ່ທັນມີການພັດທະນາທາງດ້ານການຮັກສາສຸຂະພາບທີ່ດີຂື້ນ ໃຫ້ມີການພັດທະນາວຽກງານສຸຂະພາບດີຂື້ນເທື່ອລະກ້າວ ພ້ອມກັນນັ້ນທາງທີມງານຍັງໄດ້ຊ່ວຍວາງແຜນພັດທະນາບາງວຽກງານສຸຂະພາບທີ່ທາງບ້ານຍັງປະຕິບັດບໍ່ທັນໄດ້ ເພື່ອແນ່ໃສ່ເຮັດໃຫ້ປະຊາຊົນເຂດຫ່າງໄກຮູ້ຈັກຮັກສາສຸຂະພາບດ້ວຍຕົນເອງ ຫຼີກເວັ້ນການເກີດພະຍາດລະບາດ ເພື່ອເຮັດໃຫ້ປະຊາຊົນມີເວລາທຳມາຫາກິນລ້ຽງຊີບປະຈຳວັນ.



ບັນເທົາທຸກໄຟໄມ້ເຮືອນ ບ້ານວຽງແກ້ວ

ທ່ານໝໍ ມະນີວອນບຸນທອງສີ ຮອງຫົວໜ້າ ອົງການກາແດງລາວ ສາຂາ ຫລວງພະບາງໄດ້ລົງມອບເຄື່ອງນຸ່ງຮົ່ມ ແລະ ເຄື່ອງຄົວເຮືອນ ໃຫ້ແກ່ປະຊາຊົນ ບ້ານວຽງແກ້ວ ເມືອງ ແລະ ແຂວງ ຫລວງພະບາງ ຈຳນວນ 2 ຄອບຄົວ ທີ່ຖືກໄຟຟ້າລັດວົງຈອນໄໝ້ເຮືອນຂອງທັງສອງຄອບຄົວ ເພື່ອຊ່ວຍບັນເທົາທຸກເບື້ອງຕົ້ນ ລວມມູນຄ່າທັງໝົດ  1.841.000  ກີບ

ບ້ານ ຜາຍວກ ເມືອງ ນານ ແຂວງຫລວງພະບາງ ເປັນບ້ານ ທີ່ທາງເມືອງໄດ້ຈັດສັນໃຫ້ຍ້າຍຈາກເຂດຫ່າງໄກຊອກຫຼີກ ມາຕັ້ງຖິ່ນຖານຢູ່ແຄມທາງລົດ ປະກອບມີ 110 ຄອບຄົວ ມີ 588 ຄົນ ຍິງ 301 ຄົນ ບ້ານດັ່ງກ່າວເປັນບ້ານຊົນເຜົ່າລາວສູງ ເພື່ອເປັນການປະຕິບັດຕາມທິດທາງພັດທະນາທາງດ້ານວຽກງານສົ່ງເສີມສຸຂະພາບໃຫ້ແກ່ປະຊາຊົນບັນດາເຜົ່າ ຂອງອົງການກາແດງລາວ ສາຂາ ຫລວງພະບາງໂດຍສະເພາະແມ່ນແນ່ໃສ່ເຮັດໃຫ້ປະຊາຊົນທີ່ໄດ້ຍົກຍ້າຍຖິ່ນຖານ ໄດ້ມີນ້ຳດື່ມນ້ຳໃຊ້ທີ່ສະອາດປອດໄພ ອົງການກາແດງລາວ ຫລວງພະບາງໃນຖານະເປັນອົງການຊ່ວຍເຫຼືອບັນເທົາທຸກ ໄດ້ສ້າງນ້ຳລິນໃຫ້ແກ່ບ້ານດັ່ງກ່າວ ໂດຍມີ 1 ຫົວງານ ແລະ 1 ອ່າງເກັບນ້ຳໃຫຍ່ ພ້ອມຕິດກ໊ອກອ້ອມອ່າງ ຈຳນວນ 4 ກ໊ອກ ມີຄວາມຍາວແຕ່ຫົວງານຫາອ່າງເ້ກັບນ້ຳ 300 ແມັດ , ໂດຍນຳໃຊ້ທໍ່ຢາງ PE . PN 6 ຂະໜາດທໍ່ຢາງເບີ 32 ມູນຄ່າການກໍ່ສ້າງທັງໝົດ 10.780.000  ກີບ



ສ້າງນ້ຳລິນໃຫ້ປະຊາຊົນບ້ານ ຜາຍວກ ເມືອງນານ

ເພື່ອປະຕິບັດຕາມທິດຂອງອົງການກາແດງລາວ ສາຂາ ຫລວງພະບາງໃນການພັດທະນາບ້ານເປົ້າໝາຍ ຂອງກາແດງລາວທີ່ລົງພັດທະນາທາງດ້ານວຽກງານຮັກສາສຸຂະພາບ ແລະ ເພື່ອແນໃສ່ພັດທະນາໃຫ້ກາຍເປັນ ບ້ານ ສາມສະອາດ ໃນອານາຄົດ ພາຍຫຼັງທີ່ກາແດງລາວໄດ້ສ້າງນ້ຳລິນໃຫ້ແກ່ບ້ານດັ່ງກ່າວ ເພື່ອໃຫ້ບັນລຸເຖິງເປົ້າໝາຍຂອງບ້ານສາມສະອາດ ແລະ ເພື່ອເປັນການປ້ອງກັນບໍ່ໃຫ້ມີການເກີດພະຍາດຖອກທ້ອງໃນອານາຄົດ ທາງກາແດງລາວຈຶ່ງໄດ້ສ້າງວິດຖ່າຍໃຫ້ແກ່ບ້ານດັ່ງກ່າວອີກ ຈຳນວນ 70 ຫົວ ມີມູນຄ່າໃນການກໍ່ສ້າງທັງໝົດ 13.234.000  ກີບ



ສ້າງວິດຖ່າຍໃຫ້ແກ່ ປະຊາຊົນບ້ານ ຫາດແຄ ເມືອງ ປາກອູ



ນ້ຳລິນ ບ້ານສີບຸນໂຮມ ເມືອງ ປາກອູ

ບ້ານ ສີບຸນໂຮມເມືອງ ປາກອູ ແຕ່ຫຼັງຜ່ານມາແມ່ນປະຊາຊົນໄດ້ຕັ້ງບ້ານເຮືອນຢູ່ອີກຝັ່ງໜຶ່ງຂອງນ້ຳອູ,ພາຍຫຼັງທີ່ລັດຖະບານໄດ້ມີການພັດທະນາໂດຍສະເພາະແມ່ນທົນທາງ ແລະ ໄຟຟ້າ ປະຊາຊົນບ້ານດັ່ງກ່າວຈຶ່ງໄດ້ພາກັນຍ້າຍບ້ານມາຕັ້ງຢູ່ບ່ອນທີ່ຈະມີການພັດທະນາ ແຕ່ວ່າກໍ່ມີຄວາມຫຍຸ້ງຍາກທາງດ້ານນ້ຳດື່ມນ້ຳໃຊ້ ດັ່ງນັ້ນທາງອົງການກາແດງລາວ ສາຂາ ຫລວງພະບາງຈຶ່ງໄດ້ຊອກຫາແຫຼ່ງທຶນເພື່ອມາສ້າງນ້ຳລິນໃຫ້ແກ່ປະຊາຊົນບ້ານດັ່ງກ່າວ ໃຫ້ມີນ້ຳດື່ມ ນ້ຳໃຊ້ ແລະ ເປັນການລຸດຜ່ອນແຮງງານຂອງແມ່ຍິງ ແລະ ເດັກນ້ອຍໃນການຕັກນ້ຳທີ່ຫ່າງໄກບ້ານມາບໍລິໂພກໃນແຕ່ລະວັນ,ໂຄງການກໍ່ສ້າງນ້ຳລິນບ້ານສີບຸນໂຮມປະກອບມີທໍ່ຢາງດຳPE ,PN6 ນ້ຳເບີ 32 ມມ ແລະ ນ້ຳເບີ 50 ມມ,ມີຄວາມຍາວແຕ່ຫົວງານທາງອ່າງເກັບນ້ຳໃຫຍ່ 1.300 ແມັດ,ມີ 1ຫົວງານ,1 ອ່າງລົດຄວາມດັນ,6 ກ໊ອກ,1 ອ່າງເກັບນ້ຳໃຍ່ ຂະໜາດ 3x3x2 ແມັດສາມາດບັນຈຸນ້ຳໄດ້ 18.000 ລິດ,ໂດຍໃຊ້ງົບປະມານໃນການກໍ່ສ້າງທັງໝົດ 56.456.000 ກີບ,ທຶນປະຊາຊົນສົມທົບ 25.280.000 ກີບ,ທຶນອົງການກາແດງລາວ 31.176.000 ກີບ.



ໃນວັນທີ່ 11/7/07 ຜູ້ບໍລິຫານໂຮງແຮມພູວ່າວ ໄດ້ນຳພາພະນັກງານພາຍໃນໂຮງແຮມບໍລິຈາກເລືອດຊ່ວຍສັງຄົມໂດຍບໍ່ຫວັງສິ່ງຕອບແທນໂດຍມີຜູ້ສະມັກທັງໝົດ 15 ທ່ານໃນນັ້ນແມ່ນຄົນຕ່າງປະເທດ 3 ທ່ານເຊິ່ງແມ່ນຄະນະບໍລິຫານໂຮງແຮມພູວ່າວ ໄດ້ເລືອດທັງໝົດ 15 ຖົງ. ໃນອານາຄົດ ທ່ານ ສີພັນ ຮັບຜິດຊອບວຽກງານບໍລິຫານໂຮງແຮມພູວ່າວ ໄດ້ບອກກັບທີມງານວ່າ ໃນອານາຄົດຈະລະດົມພະນັກງານຂອງໂຮງແຮມຊ່ວຍບໍລິຈາກເລືອດໃຫ້ອົງການກາແດງລາວ ສາຂາ ຫລວງພະບາງ ໄປຕະຫຼອດເປັນໄລຍະຕາມຄວາມເໝາະສົມ ເພື່ອຊ່ວຍກອບກູ້ເອົາຊີວິດຂອງຄົນເຈັບຜູ້ທີ່ຕ້ອງການໃສ່ເລືອດ ຫຼື ຄົນເຈັບຜູ້ທຸກຈົນ.

## ກິດຈະກຳທີ່ຈະປະຕິບັດໃນເດືອນ 7 / 2007 ປະກອບມີ:

- ສືບຕໍ່ສິ່ງວັດຖຸກໍ່ສ້າງນ້ຳລິນໃຫ້ແກ່ປະຊາຊົນບ້ານ ນາກາງ ເມືອງ ຈອມເພັດ,ບ້ານ ຫາດຕືນ ເມືອງ ປາກແຊງ, ບ້ານ ຫ້ວຍເຢັນ ເມືອງ ນ້ຳບາກ. ( ພ້ອມທັງລົງມືກໍ່ສ້າງ )
- ສືບຕໍ່ສິ່ງວັດຖຸກໍ່ສ້າງວິດຖ່າຍໃຫ້ແກ່ປະຊາຊົນ ບ້ານ ຜາແກ້ວ ເມືອງ ພູຄູນ ແລະ ບ້ານ ຫ້ວຍຮຽມ ເມືອງ ນ້ຳບາກ
- ລົງຢ້ຽມບ້ານ , ກວດກາ ແລະ ໂຄສະນາສຸຂະສຶກສາ ອ ສ ມ ບ້ານ ຫ້ວຍຖ້ຳ ເມືອງ ຈອມເພັດ , ບ້ານ ຫ້ວຍຮີດ ແລະ ບ້ານ ຫ້ວຍຮຽມ ເມືອງ ນ້ຳບາກ, ບ້ານ ໂພນຄຳ ບ້ານ ບັງກາໂລ ແລະ ບ້ານ ຈັ່ງເຮືອນ ເມືອງ ພູຄູນ
- ລົງຈັດຫາເລືອດຢູ່ ໂຮງຮຽນບຳລຸງທະຫານ